# ວັກຊີນ
# ເຕົ້າໂຮມເລືອດ ງົວ ຄວາຍ

## ນິຍາມ:

ວັກຊີນຊະນິດນີ້ ປຸງແຕ່ງຈາກເຊື້ອພັນ *PASTEURELLA MULTOCIDA* ໃນພູມປູກນ້ຳຊີ້ນ ແລະ ຂ້າເຊື້ອດ້ວຍຟອກໂມນ ເປັນວັກຊີນເຊື້ອຕາຍຊະນິດນ້ຳປະສົມກັບ ອາລຸຍມິນຽມ ໄຮດຣົກຊາຍເຈນ ແລະ ຊະນິດນ້ຳມັນປະສົມກັບລາໂນລິນ ແລະ ນ້ຳມັນປາຣາຟິນ ( *Lanolin and liquid paraffin* ) ເປັນສານເສີມພະລັງ.




## ລັກສະນະອາການ

ພະຍາດເກີດຂຶ້ນກັບງົວ ຄວາຍ. ໄຂ້ຂຶ້ນສູງບໍ່ກິນຫຍ້າ ໄຄ່ຕາມກ້ອງຄາງ, ຕາມລຳຄໍ ເຮັດໃຫ້ສັດຫາຍໃຈຍາກ ແລະ ມີສຽງຜິດປົກກະຕິເວລາຫາຍໃຈ. ຕາແດງມີນ້ຳມູກ ນ້ຳຕາໄຫຼອອກມາ ຕໍ່ມາທ້ອງເບັງແລ້ວຖອກທ້ອງ ອາຈົມແກມເລືອດຕໍ່ມາກໍ່ຕາຍ.

## ຂໍ້ແນະນຳ:

ໃຊ້ປ້ອງກັນພະຍາດເຕົ້າໂຮມເລືອດງົວ ຄວາຍ ອາຍຸ 6 ເດືອນຂຶ້ນໄປ. ດີທີ່ສຸດຄວນໃຊ້ວັກຊີນນີ້ ກ່ອນລະດູຝົນຈະມາຮອດ.

## ວິທີໃຊ້:

- ຕ້ອງສັ່ນໃຫ້ລະອຽດດີກ່ອນໃຊ້ .



- ສັກຫຼືບໜັງໂຕລະ 3 ມລ. (ສຳລັບວັກຊີນຊະນິດນ້ຳ).
- ສັກກ້າມຊີ້ນໂຕລະ 3 ມລ.(ສຳລັບວັກຊີນຊະນິດນ້ຳມັນ)



(ສັກກ້າມຊີ້ນກົກຂາ ແລະ ຄໍ)

- ຫຼັງຈາກສັກຢາອຸນນະພູມຂອງສັດ ຈະເພີ້ມຂຶ້ນເລັກນ້ອຍແລະ ມີການໄຄ່ຢູ່ຕາມບ່ອນສັກຢາພາຍໃນໄລຍະ 2 — 3 ມື້.





ສັກກ້າມຊີ້ນກົກຂາ ແລະ ຄໍ

## ໄລຍະຄຸ້ມກັນ:

ສັດມີຄວາມຄຸ້ມກັນ ຫຼັງຈາກສັກຢາໄດ້ 2 ອາທິດ ໄລຍະຄຸ້ມກັນໄດ້ 6 ເດືອນ ( ສຳລັບວັກຊີນຊະນິດນ້ຳມັນ ).

ສັດຈະມີຄວາມຄຸ້ມກັນ ຫຼັງຈາກສັກໄດ້ 10 ມື້ ຫາ 1 ເດືອນ. ໄລຍະຄຸ້ມກັນແມ່ນ 1 ປີ. ( ສຳລັບວັກຊີນຊະນິດນ້ຳມັນ ).

## ການເກັບຮັກສາ:

ຮັກສາໄວ້ໃນອຸນນະພູມ 4 ອົງສາ ກຸ້ມໄດ້ 1 ປີ. ເວລາຂົນຍ້າຍວັກຊີນ ຄວນຫຼີກເວັ້ນບໍ່ໃຫ້ຖືກແສງແດດ ແລະ ອຸນນະພູມອົບເອົ້າເກີນໄປ.

## ແກ້ວບັນຈຸ: ແກ້ວໜຶ່ງບັນຈຸ 100 ມລ / 30 ເຂັມ.

ຕາຕະລາງ : ການນຳໃຊ້ຢາວັກຊີນ ເຕົ້າໂຮມເລືອດ ງົວ, ຄວາຍ

| ຊະນິດຢາວັກຊີນ | ອາຍຸສັດຕ້ອງໃຊ້ | ວິທີໃຊ້ | ໄລຍະຄຸ້ມກັນ |
|---|---|---|---|
| • ຢາວັກຊີນ ເຕົ້າໂຮມເລືອດ ງົວ, ຄວາຍ. | • ໃຊ້ກັບ ງົວ, ຄວາຍ (ອາຍຸ 6 ເດືອນ ຂຶ້ນໄປ). | • ສັກຫຼືບໜັງ ໂຕລະ3 ມລ. (ສຳລັບວັກຊີນຊະນິດນ້ຳ).<br>• ສັກກ້າມຊີ້ນ ໂຕລະ 3 ມລ. (ສຳລັບວັກຊີນ ຊະນິດນ້ຳມັນ) | 6 ເດືອນ (ສຳລັບວັກຊີນຊະນິດນ້ຳ).<br>• 1 ປີ (ສຳລັບວັກຊີນຊະນິດນ້ຳມັນ) |



Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ

# ການນຳໃຊ້ຢາວັກຊີນ ເຕົ້າໂຮມເລືອດ ງົວ, ຄວາຍ



ຄັດຈາກ: ປື້ມຄູ່ມືການນຳໃຊ້ວັກຊີນສຳລັບສັດ (1997)

ຮຽບຮຽງໂດຍ :

ໜ່ວຍງານຝຶກອົບຮົມສົ່ງເສີມ ຂັ້ນສູນກາງ (CETDU)

ສະໜັບສະໜູນໂດຍ :

ໂຄງການ ສົ່ງເສີມ ກະສິກຳ (LEAP)